ສຳນັກງານ ຄຄຊ
ເລກທີ..0887.......
ວັນທີ..29. AUG 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 35 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 29 ສິງຫາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 12-16/08/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,15% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງ ສ. ອາເມລິກາ ອອກມາດີ ເຫັນໄດ້ຈາກຕົວເລກຍອດຂາຍສິນຄ້າຂາຍຍ່ອຍໃນເດືອນ ກໍລະກົດ 2019 ເພີ່ມຂຶ້ນ 0,70% ຈາກ 0,30% ໃນເດືອນທີ່ຜ່ານມາ. ພ້ອມນັ້ນ, ຕົວເລກໃບອະນຸຍາດການກໍ່ສ້າງ ເພີ່ມຂຶ້ນ 8,4% ຈາກຫຼຸດລົງ 5,2% ໃນເດືອນຜ່ານມາ

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 05-09/08/2019 | ອາທິດນີ້ 12-16/08/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1209 | 1,1082 | 1,15% |
| ເຢນ/ໂດລາ | 105,84 | 106,43 | -0,55% |
| ບາດ/ໂດລາ | 30,730 | 30,900 | -0,55% |
| ເປໂຊ/ໂດລາ | 51,88 | 52,33 | -0,87% |
| ຣູເປັຍ/ໂດລາ | 14.195,00 | 14.240,00 | -0,32% |
| ໂດລາສິງກະໂປ/ໂດລາ | 1,3824 | 1,3876 | -0,37% |
| ຢວນ/ໂດລາ | 7,0602 | 7,0398 | 0,29% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 5,27% ຈາກ 52,79 ໂດລາ/ບາເຣວ ມາເປັນ 55,57 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງບັນດາປະເທດຜະລິດນ້ຳມັນຫຼຸດລົງເປັນຕົ້ນແມ່ນ ສ. ອາເມລິກາ ແລະ ປະເທດອີຫຼ່ານ ອັນເປັນຜົນມາຈາກມາດຕະການຂວ່ຳບາດຂອງ ສ. ອາເມລິກາ ຕໍ່ປະເທດອີຫຼ່ານສົ່ງຜົນໃຫ້ປະລິມານການສົ່ງອອກນ້ຳມັນດິບຂອງປະເທດອີຫຼ່ານໃນເດືອນ 07/2019 ປັບຫຼຸດລົງປະມານ 130.000 ບາເຣວ/ວັນ ສູ່ລະດັບ 400.000 ບາເຣວ/ວັນ ຊຶ່ງເປັນຕົວເລກຕ່ຳສຸດຕັ້ງແຕ່ປີ 1980;
- ລາຄາຄຳ ເພີ່ມຂຶ້ນ 0,40% ຈາກ 1.503,95 ໂດລາ/ອອນ ມາເປັນ 1.509,99 ໂດລາ/ອອນ ເນື່ອງຈາກເງິນໂດລາມີຄວາມຜັນຜວນ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບເງິນຕາພາຍໃນ

### 2.1 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 08/2019 ຄາດວ່າຢູ່ໃນລະດັບ 3,19%.

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,49% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 18,31%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,07% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,14%.

### 2.3 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,51% ແລະ ອ່ອນຄ່າລົງ 0,42% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 2,89% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 8,56% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 05-09/08/2019 | | | ອາທິດນີ້ 12-16/08/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.812,01 | 8.842,14 | 8.826,24 | 8.856,92 | 8.885,78 | 8.871,27 | -0,51% | -0,49% | -0,51% | -2,88% | -2,90% | -2,89% |
| ບາດ | 289,91 | 291,33 | 290,76 | 291,35 | 292,46 | 291,99 | -0,49% | -0,38% | -0,42% | -8,63% | -8,54% | -8,56% |

### 2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (09-15/08/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຂາຍເງິນໂດລາສຸດທິ 0.41 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 20,23 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 20,64 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 210,17 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 142,52 ລ້ານບາດ ແລະ ຂາຍເງິນບາດໄດ້ 352,69 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 33,84% ແລະ ເງິນບາດຫຼຸດລົງ 1,57%;

---

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມເງິນໂດລາໃຫ້ ທທກ ຈຳນວນ 0,10 ລ້ານໂດລາ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ເປັນເງິນໂດລາຈຳນວນ 2,10 ລ້ານໂດລາ ແລະ ເງິນບາດຈຳນວນ 4,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 02/08-08/08/2019 | | ອາທິດນີ້ 09-15/08/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **47,75** | **136,78** | **20,23** | **142,52** | **-57,63%** | **4.20%** |
| - ທ/ຄທຸລະກິດລັດ | 9,53 | 36,89 | 6,73 | 25,50 | -29,38% | -30.88% |
| - ທ/ຄທຸລະກິດອື່ນໆ | 38,22 | 99,89 | 13,50 | 117,02 | -64,68% | 17.15% |
| **2. ການຂາຍເງິນຕາຕ່າງປະເທດ** | **14,02** | **366,33** | **20,64** | **352,69** | **47.22%** | **-3.72%** |
| - ທ/ຄທຸລະກິດລັດ | 4,31 | 82,19 | 6,43 | 76,35 | 49.19% | -7.11% |
| - ທ/ຄທຸລະກິດອື່ນໆ | 9,71 | 284,14 | 14,21 | 276,34 | 46.34% | -2.75% |
| **ຊື້-ຂາຍສຸດທິ ທທກ** | **33,73** | **-229,55** | **-0,41** | **-210,17** | **-101.22%** | **-8.44%** |
| - ຜິດດ່ຽງຊື້-ຂາຍ | 70,64% | -167,82% | -2,03% | -147,47% | -102.87% | -12.13% |
| **- ມູນຄ່າການຊື້-ຂາຍ** | **61,77** | **503,11** | **40,87** | **495,21** | **-33.84%** | **-1.57%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **0,00** | **0,00** | **-0,10** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 0,10 | 0,00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **0,00** | **0,20** | **2,10** | **4,00** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (09-15/08/2019) ຈຳນວນ 98,75 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼເຂົ້າມີຈຳນວນ 436,88 ລ້ານໂດລາ (ສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 63,20 ລ້ານໂດລາ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 37,67 ລ້ານໂດລາສະຫະລັດ, ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 202,11 ລ້ານໂດລາສະຫະລັດ ແລະ ເງິນກູ້ຢືມຂອງທະນາຄານທຸລະກິດ ຈຳນວນ 120,00 ລ້ານໂດລາສະຫະລັດ). ສ່ວນກະແສເງິນໄຫຼອອກ ຈຳນວນ 338,13 ລ້ານໂດລາ ສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການຈຳນວນ 78,15 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 40,77 ລ້ານໂດລາ ແລະ ຖອນເງິນຝາກຈາກທະນາຄານທີ່ຕັ້ງຢູ່ລາວ ຈຳນວນ 202,11 ລ້ານໂດລາ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 613 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 154 ສະບັບ, ລວມມູນຄ່າໂອນທັງໝົດ 346,34 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 233,77 ຕື້ກີບເທົ່າກັບ 40,29%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (09-15/8/2019) ມີທັງໝົດ 4.044 ຄັ້ງ ຫຼຸດລົງ 75 ຄັ້ງທຽບໃສ່ອາທິດທີ່ຜ່ານມາ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.182,28 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ຫຼຸດລົງ 86,83 ຕື້ກີບ ຫຼື ເທົ່າກັບ 6,84%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈໍານວນ 120 ຄັ້ງ, ລວມມູນຄ່າໂອນທັງໝົດ 95,68 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນຈໍານວນເງິນ 37,07 ຕື້ກີບ ກວມເອົາ 35,57%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 766,61 ຈຸດ ເພີ່ມຂຶ້ນ ຈາກ 765,89 ຈຸດ ຫຼື ເທົ່າກັບ 0,09% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 335.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,33 ຕື້ກີບ ຫຼຸດລົງ 8,48% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 50,58%. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ໃນອາທິດນີ້ແມ່ນມາຈາກການເພີ່ມຂຶ້ນຂອງລາຄາຮຸ້ນ SVN ແລະ EDL-GEN.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ (02-08 ສິງຫາ 2019) | | | ອາທິດນີ້ (09-15 ສິງຫາ 2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈໍານວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 53.200 | 318.955.000 | 6.000 | 159.000 | 951.245.000 | 6.000 | 198,87 | 198,24 | - |
| **EDL-GEN** | 72.900 | 270.842.000 | 3.790 | 73.500 | 271.968.000 | 3.720 | 0,82 | 0,42 | 0,54 |
| **LWPC** | - | - | 7,150 | - | - | 7.150 | - | - | - |
| **PTL** | 7.400 | 3.330.000 | 450 | 800 | 360.000 | 450 | -89,19 | -89,19 | - |
| **SVN** | 1.000 | 2.200.000 | 2.050 | - | - | 2.100 | -100,00 | -100,00 | 2,44 |
| **PCD** | 300 | 330.000 | 1.000 | 200 | 190.000 | 950 | -33,33 | -42,42 | -9,52 |
| **LCC** | - | - | 2.050 | 100 | 205.000 | 2.050 | - | - | - |
| **MHTL** | - | - | 2.950 | 300 | 880.000 | 2.950 | - | - | - |
| **LAT** | 100 | 75.000 | 750 | - | - | 750 | - | - | - |
| **VCL** | 817.600 | 858.480.000 | 1.100 | 101.100 | 106.105.000 | 950 | -85,56 | -85,57 | -9,52 |
| **ທັງໝົດ** | 952.500 | 1.454.212.000 | | 335.000 | 1.330.953.000 | | -64,83 | -8,48 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈໍາເປັນຈໍານວນໜຶ່ງເປັນຕົ້ນ: ❶ສືບຕໍ່ເຂົ້າຮ່ວມກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈໍາເດືອນ ສິງຫາ 2019; ❷ກອງປະຊຸມສໍາມະນາໃນຫົວຂໍ້: "Presentation on the Lao Economic Monitor July 2019"; ❸ກອງປະຊຸມທະວິພາຄີລະຫວ່າງ ທຫລ ແລະ ທະນາຄານປະຊາຊົນຈີນ (ທປຈ) ທີ່ປະເທດ ສປ. ຈີນ ພ້ອມທັງໄດ້ຮັບມອບສິດຕາງໜ້າລັດຖະບານ ແຫ່ງ ສປປ ລາວ ມອບຫຼຽນກາມິດຕະພາບໃຫ້ແກ່ ທປຈ; ❹ກອງປະຊຸມສໍາມະນາໃນຫົວຂໍ້: "Bangkok Sustainable Banking Forum 2019:

An Industry Wake-up Call" ທີ່ ປະເທດໄທ ແລະ ❺ກອງປະຊຸມສຳມະນາໃນຫົວຂໍ້: "2019 Seminar on Financing and Financial Cooperation" ຢູ່ ສປ. ຈີນ.

- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສຳຄັນ ແລະ ວຽກງານປິ່ນອ້ອມຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມເປີດກວ້າງປະກອບຄຳເຫັນຕໍ່ຮ່າງດຳລັດວ່າດ້ວຍການເງິນ ແລະ ການບັນຊີຂອງ ທຫລ; ❷ກອງປະຊຸມຜ່ານຮ່າງດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ; ❸ກອງປະຊຸມປຶກສາຫາລືກ່ຽວກັບຮ່າງກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍວິສາຫະກິດທີ່ຕິດກັບການລົ້ມລະລາຍຂອງ ສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ; ❹ກອງປະຊຸມປຶກສາຫາລືກ່ຽວກັບຕົວຊີ້ວັດການເບີກຖອນເງິນກູ້ນຳທະນາຄານໂລກ; ❺ກອງປະຊຸມພົບປະກັບສາຂາທະນາຄານສົ່ງເສີມກະສິກຳທົ່ວປະເທດ; ❻ກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃຫ້ແກ່ພະນັກງານຢູ່ຫໍພິພິທະພັນໄກສອນພົມວິຫານ; ❼ກອງປະຊຸມເຜີຍແຜ່ກົດໝາຍທີ່ປັບປຸງ ແລະ ສ້າງຂຶ້ນໃໝ່ຂອງ ທຫລ ໃຫ້ແກ່ທະນາຄານນະໂຍບາຍ ແລະ ທະນາຄານຮ່ວມທຸລະກິດລາວ-ຫວຽດ ແລະ ❽ກອງປະຊຸມກ່ຽວກັບການຄົ້ນຄວ້າປະເມີນດ້ານທຸລະກິດ ແລະ ຄົ້ນຄວ້າປະເມີນດ້ານເຕັກນິກຂອງຕະຫຼາດຫຼັກຊັບລາວ.
- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ອະນຸຍາດໃຫ້ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອມະຫາຊົນ ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO); ❷ຮັບຮອງບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນຈຳກັດຜູ້ດຽວເຄື່ອນໄຫວເປັນບໍລິສັດປະເມີນມູນຄ່າຊັບສິນໃນວຽກງານຫຼັກຊັບ; ❸ອະນຸຍາດໃຫ້ທະນາຄານຮ່ວມພັດທະນາ ຈຳກັດ ລົງທຶນຂະຫຍາຍທະນາຄານໃນກຸ່ມຂອງຕົນຢູ່ລາຊະອານາຈັກກຳປູເຈຍ; ❹ລົງກວດກາທະນາຄານ ຄາເທ ຢູ່ໄນເຕັດ ສາຂານະຄອນຫຼວງວຽງຈັນ ແລະ ທະນາຄານ ລາວຈີນ ຈຳກັດ ຕາມແຜນປະຈຳປີ 2019 ແລະ ❺ລົງກວດກາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກປະຈຳປີ 2018 ຈຳນວນ 04 ແຫ່ງ (ປັນຍາພອນ, ອຳມະລາ, ອຸດົມຊັບ ແລະ ເມືອງລາວ).
- **ທຫລ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**ຜູ້ຕາງໜ້າຫ້ອງການ IMF ປະຈຳ ສປປ ລາວ ແລະ ຄະນະຊ່ຽວຊານສູນຂໍ້ມູນຂ່າວສານສິນເຊື່ອແຫ່ງຊາດຈາກປະເທດ ສສ. ຫວຽດນາມ.

**III.** <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ສິງຫາ 2019 ແລະ ❷ກອງປະຊຸມກະກຽມເນື້ອໃນໃຫ້ແກ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ; ❸ກອງປະຊຸມຄະນະກຳມະການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນອາຊຽນຄັ້ງທີ VIII ແລະ ❹ກອງປະຊຸມວຽກງານ ACMF Deputies ແລະ ກອງປະຊຸມຄະນະ WC-CMD ຢູ່ປະເທດໄທ.
- **ທຫລ ກະກຽມຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມສຳມະນາວຽກຍຸດທະສາດການເງິນ-ເງິນຕາໃຫ້ແກ່ນັກຝຶກອົບຮົມທິດສະດີລະບົບບຳລຸງ 45 ວັນ; ❷ກອງປະຊຸມປຶກສາຫາລືກ່ຽວກັບແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ ໄລຍະ 08 ປີ (2018-2025); ❸ກອງປະຊຸມກ່ຽວກັບການຄົ້ນຄວ້າປະເມີນດ້ານທຸລະກິດ ແລະ ດ້ານເຕັກນິກຂອງຕະຫຼາດຫຼັກຊັບລາວ; ❹ກອງປະຊຸມຄົ້ນຄວ້າວຽກງານຫັນສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເປັນນິຕິບຸກຄົນ; ❺ກອງປະຊຸມສຳມະນາຮ່ວມກັບ ຄຄຊ ສ. ເກົາຫຼີໃນຫົວຂໍ້:

“Market Misconduct, ການບັງຄັບໃຊ້ລະບຽບການ (Enforcement), ການຄຸ້ມຄອງຂອງຕະຫຼາດຫຼັກຊັບ, ສູນຮັບຝາກຫຼັກຊັບ ແລະ ສູນຊໍາລະສະສາງຕາມປະເພດຄວາມສ່ຽງ, ການຄຸ້ມຄອງ ແລະ ພັດທະນາຜະລິດຕະພັນ” ແລະ ❻ກອງປະຊຸມຮ່ວມເຮັດວຽກກັບບໍລິສັດ LAPNet ແລະ ທະນາຄານທຸລະກິດກ່ຽວກັບການຄົ້ນຄວ້າສ້າງມາດຕະຖານ QR Code ເພື່ອການຊໍາລະຂອງ ສປປ ລາວ.

ເຊັນແທນຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ພຸນມະລີ ສີຣິພົນເດດ